# ຊີວິດ ແລະ ຜົນງານ

# ສອງພຣະໜຸ່ມ

# ເນື່ອງໃນພິທີເຖຣາພິເສກ



## ພຣະຊາຍຄຳ ຈຳປາອຸທຸມ

## ພຣະມະຫາບຸນທະວີ ວິໄລຈັກຣ໌

ວຽງຈັນ, ວັນທີ ໐໙ ທັນວາ ໒໐໐໑

# ຊີວິດ ແລະ ຜົນງານ

# ສອງພຣະຫນຸ່ມ

# ເນື່ອງໃນພິທີເຖຣາພິເສກ


ພຣະຊາຍຄຳ ຈຳປາອຸທຸມ

ພຣະມະຫາບຸນທະວີ ວິໄລຈັກຣ໌



ວຽງຈັນ, ວັນທີ ໐໙ ທັນວາ ໒໐໐໑

# ຄຳປາລົບ

ນັບຕັ້ງແຕ່ຄົນລາວຍອມຮັບນັບຖືພຸດທະສາສນາຢ່າງເປັນຫລັກເປັນເກນນັ້ນ ກໍເປັນເວລາດົນນານພໍສົມຄວນ ຖ້າອ່ານຕາມປະຫວັດສາດ ຈະເຫັນໄດ້ວ່າ ຄົນລາວໄດ້ເອົາຊີວິດຂອງຕົນເຂົ້າຜູກພັນຮັດແຫນ້ນຢູ່ກັບພຸດທະສາສນາ ໃຫ້ຄວາມເຄົາຣົບນັບຖືຮັກສາໄວ້ ເປັນມໍຣະດົກຕົກທອດມາຈົນຮອດບັດນີ້ ພຸດທະສາສນາໄດ້ເຊື່ອມຊຶມ ໄປໃນສ່ວນຕ່າງໆຂອງຊີວິດ ແລະ ຈິດໃຈຈົນກາຍເປັນໂຄງຮ່າງພື້ນຖານຂອງສັງຄົມລາວ ພຸດທະສາສນາໄດ້ໃຫ້ປະໂຫຍດ ແລະ ຄຸນຄ່າມະຫາສານ ເຫລືອປະມານຈົນສາມາດກ່າວໄດ້ວ່າ ຖ້າຫາກນຳພຸດທະສາສນາ ອອກຈາກຄົນລາວແລ້ວ ຄົນລາວກໍຄົງຈະເຫັນວ່າບໍ່ມີອັນໃດຕິດຕົວ ແລະ ຫົວໃຈ ເພາະນັບແຕ່ເກີດຈົນຮອດຕາຍກໍຕ້ອງໄດ້ພົວພັນກັບພຣະສົງ. ແຕ່ມີບາງຄັ້ງພວກເຮົາກໍລືມຄຸນຄ່າ ແລະ ຄວາມສຳຄັນນັ້ນໄປ ແລະ ລືມຫນ້າທີ່ ທີ່ພວກເຮົາຕ້ອງໄດ້ຮັບຜິດຊອບຕໍ່ພຸດທະສາສນາຮ່ວມກັນອາດຈະຖືວ່າເປັນຂອງພຣະສົງ, ຂອງຜູ້ຢູ່ໃນວັດເທົ່ານັ້ນ. ຖ້າເຂົ້າໃຈແບບນັ້ນມັນກໍຜິດແນ່ນອນ ເພາະພຸດທະສາສນາເປັນຂອງຫມົດທຸກຄົນ ໂດຍມີຄຳວ່າພຸດທະບໍຣິສັດທັງ ໔ ອັນໄດ້ແກ່ພຣະສົງ, ພິກຂຸນີ, ອຸບະສົກ (ພໍ່ອອກ), ອຸປະສິກາ (ແມ່ອອກ) ຈະຕ້ອງໄດ້ເປັນເຈົ້າການໃນການ

ເບິ່ງແຍງພູດູແລ ແລະປົກປັກຮັກສາ, ບໍ່ໃຫ້ຄົນຊົ່ວອາໃສພຸດທະສາ
ສນາເປັນເຄື່ອງມື, ສວຍໃຊ້ພຸດທະສາສນາ ສວຍໃຊ້ສັດທາຂອງ
ຍາດໂຍມທີ່ມີຕໍ່ພຸດທະສາສນາ ໂດຍປາດສະຈາກຄວາມເຂົ້າໃຈໃນ
ຫລັກທັມຄຳສອນອັນ ເປັນແກ່ນແທ້ ປະຕິບັດຕາມແລ້ວໄດ້ຜົນຈິງ.
ສວຍໂອກາດເອົາຄວາມຖືກໃຈ, ຄວາມຕ້ອງການຂອງເຂົາຫລອກ
ຫລວງ, ທຳລາຍສັດທາອັນບໍຣິສຸດຂອງຊາວພຸດ ຈະເຫັນໄດ້ວ່າໃນ
ອະດີດຜ່ານມານັ້ນກໍ ຈະມີເຫດການຕ່າງໆເກີດຂຶ້ນໃຫ້ເຫັນເປັນຕົວ
ຢ່າງ ດັ່ງນັ້ນໃນເມື່ອ ພວກເຮົາຮູ້ຄຸນຄ່າ, ຮູ້ວ່າພຸດທະສາສນາມີ
ຄວາມເປັນມາຍາວນານຈົນກາຍເປັນສົມບັດຂອງຊາດ ພວກເຮົາກໍ
ຕ້ອງໄດ້ສຶກສາວ່າອັນໃດ ຄືຫລັກຄຳສອນຂອງພຸດທະສາສນາ, ອັນ
ໃດແມ່ນຮີດຄອງປະເພນີ ວັດທະນະທຳອັນດີງາມ, ອັນໃດແມ່ນ
ສາສນາພາມ, ຜີ ເຊື່ອງປະປົນຢູ່ ໃນຄວາມເຊື່ອຖືຂອງຄົນ ໃນແຕ່
ລະທ້ອງຖິ່ນ ຖ້າຫາກພວກເຮົາຮູ້ດີ ແນວນັ້ນຈະເຮັດໃຫ້ພຸດທະ
ສາສນາ ເປັນສາສນາທີ່ມີຄວາມບໍຣິສຸດ ແລະ ມີຄຸນຄ່າຂຶ້ນ ພວກ
ເຮົາຜູ້ປະຕິບັດຕາມກໍຈະໄດ້ຮັບແຕ່ຄວາມສຸກ ສັນຕິຢ່າງແນ່ນອນ.

ເນື່ອງໃນງານເຖຣາພິເສກທົດສົງພຣະຊາຍຄຳ ຈ່າອຸທຸມ
ພຣະມະຫາບຸນທະວີ ວິໄລຈັກຣ ອັນມີສັດທາຂອງ ຍາແມ່ ສຸວັນຄຳ
ພ້ອມດ້ວຍລູກຫລານຍາດມິດຄຽງນີ້, ພວກຂ້າພະເຈົ້າພຣະທີ່ມຸ່ງກັງ

ສອງຈິ່ງໄດ້ພິຈາຣະນາວ່າ ເຫັນສົມຄວນຈັດພິມຫນັງສື ເພື່ອມອບເປັນບັນນາການແກ່ທ່ານທີ່ໄດ້ເຂົ້າຮ່ວມໃນງານ ໂດຍແມ່ນເວົ້າເຖິງຊີວິດ ແລະ ຜົນງານບາງສ່ວນຂອງສອງພຣະຫນຸ່ມທີ່ໄດ້ເຄີຍຜ່ານສາຍຕາ ແລະຍັງບໍ່ເຄີຍ ຜ່ານສາຍຕາຂອງມະຫາຊົນເຂົ້າສອດແຊກໄວ້ໃນປື້ມນີ້.

ແລະການເຖຣາພິເສກທົດສົງນັ້ນມັນແມ່ນປະເພນີອັນດີງາມອັນຫນຶ່ງຂອງຄົນລາວ ທີ່ມີຄວາມເປັນມາຍາວນານດັ່ງທີ່ທຸກທ່ານຄົງຮູ້ແລ້ວ

ດັ່ງນັ້ນ ເນື່ອງໃນງານເຖຣາພິເສກທົດສົງຄັ້ງນີ້ ຈິ່ງຂໍອ້າງອີງເອົາຄຸນງາມຄວາມດີ ຄຸນພຣະສີຣັດຕະນະໄຕ ແລະ ພອນໄຊອັນປະເສີດຈິ່ງໄດ້ມາປົກປ້ອງຄຸ້ມຄອງທ່ານເຈົ້າມູນລະສັດທາ, ຄອບຄົວ ຍາດມິດ ປາຖະຫນາສິ່ງຫນຶ່ງປະການໃດອັນເປັນຄວາມຖືກຕ້ອງຊອບທັມນັ້ນແລ້ວ ຂໍຄວາມປາຖະຫນານັ້ນ ຈົ່ງສຳເຣັດຜົນດ້ວຍເຖີດ.

ວຽງຈັນ, ວັນທີ ໆ ທັນວາ ໒໐໐໑

ເລຂາທິການຊຸມນຸມນັກຂຽນສົງລາວ

ພຣະຊາຍຄຳ ຈຳປາອຸທຸມ

ປະທານຊຸມນຸມນັກຂຽນນັກຂຽນສົງລາວ

ພຣະມະຫາບຸນທະວີ ວິໄລຈັກຣ

# ປະຫວັດຄວາມເປັນມາຂອງການຫົດສົງ

ການຫົດພຣະພິກຂຸທັມມະດາ ໃຫ້ຂຶ້ນເປັນອາຈານນັ້ນ ພຣະພິກຂຸອົງນັ້ນຕ້ອງປະກອບດ້ວຍອົງຄຸນອັນສົມຄວນທີ່ຈະໄດ້ຖານັນດອນສັກຄືການຍົກຍ້ອງຂຶ້ນຕາມຄຸນະວຸດ ມີສັກເປັນຊັ້ນ ໆ ດັ່ງນີ້ຄື

(໑) ພຣະອາຈານສົມເຣັດແມ່ນໄດ້ຫົດສົງຄັ້ງທີຫນຶ່ງຜູ້ທີ່ຈະໄດ້ຫົດນັ້ນ ຕ້ອງເປັນຜູ້ທີ່ມີຜົນງານ ແລະ ຮຽນຈົບຂັ້ນໃດຂັ້ນຫນຶ່ງໃນທາງພຣະພຸດທະສາສນາຈຶ່ງມີການຫົດຄັ້ງຫນຶ່ງເອີ້ນພຣະອົງນັ້ນວ່າພຣະອາຈານສົມເຣັດ.

(໒) ພຣະອາຈານຊາ ແມ່ນຫົດຄັ້ງທີສອງເປັນຜູ້ຫມັ້ນສິກສາຮໍ່າຮຽນຈົນມີປຣິຊາສາມາດຮອບຮູ້ແຕກສານໃນດ້ານທັມມະວິໄນຈຶ່ງສົມຄວນຍົກຍ້ອງໃຫ້ດໍາລົງຖານັນດອນສັກເປັນພຣະອາຈານຊາ

(໓) ພຣະອາຈານຄູ ແມ່ນຫົດຄັ້ງທີສາມ ຜູ້ທີ່ໄດ້ຮັບຕາແຫນ່ງນີ້ແມ່ນປະກອບດ້ວຍສົມບັດສອງຢ່າງຄື ແມ່ນເປັນຜູ້ພົ້ນ

ຈາກມະອະກະພູມ ແລະ ມັດຊິມມະພູມຕັ້ງຢູ່ໃນເຖຣະພູມແລ້ວເອີ້ນວ່າ ມີໄວສົມບັດ ແລະ ເປັນພຣະຫູສູດເປັນຜູ້ອົບຣົມສັ່ງສອນນັ້ນເອງ ເອີ້ນວ່າ ພຣະອາຈານຄູ

(໔) ພຣະຫລັກຄຳ ເປັນການຫົດຄັ້ງທີສີ່ເປັນທາງການ ເປັນຕຳແຫນ່ງສຳຄັນ ປຽບໃສ່ຫລັກທີ່ຫລໍ່ດ້ວຍທອງຄຳເປັນຂອງທີ່ຫມັ້ນຄົງແຫນ້ນຫນາບໍ່ຄອນແຄນ ຜູ້ທີ່ຈະໄດ້ດຳລົງຕຳແຫນ່ງນີ້ຕ້ອງເປັນຜູ້ມີທັມເປັນຫລັກ ຫວັງຈັກຫມັ້ນຄົງໃນບ່ວອນພຸດທະສາສນາ ຈຶ່ງໄດ້ຮັບຍົກຍ້ອງເປັນພຣະຫລັກຄຳ

(໕) ພຣະລູກແກ້ວເປັນການຫົດຄັ້ງທີຫ້າເປັນທາງການ ເປັນຜູ້ທີ່ມີຄວາມຫມັ້ນຄົງໃນພຣະພຸດທະສາສນາ

(໖) ພຣະຍອດແກ້ວ ເປັນການຫົດຄັ້ງທີຫົກ ເປັນຕຳແຫນ່ງທີ່ສູງສຸດ ຄືເປັນພຣະສັງຄະປະມຸກ ປະກອບດ້ວຍຄຸນສົມບັດແລະໄວສົມບັດ ສາມາດປົກຄອງຫມູ່ຄະນະໄດ້ຫມົດປະເທດ ຈຶ່ງສະຖາປານາຂຶ້ນເປັນພຣະຍອດແກ້ວເພື່ອເປັນຍອດເປັນຈອມ.

# ຊີວິດ ແລະ ຜົນງານ



ພຣະຊາຍຄຳ ຈຳປາອຸທຸມ

ພະນັກງານປະຈຳຫ້ອງການສູນກາງອົງການພຸດທະສາສນາສຳພັນ

ເລຂາທິການຊຸມນຸມນັກຂຽນສິງລາວ

# ປະຫວັດໂດຍຫຍໍ້

## (ພຣະຊາຍຄໍາ ຈໍາປາອຸທຸມ)

ພຣະຊາຍຄໍາ ຈໍາປາອຸທຸມ ເກີດເມື່ອວັນທີ ໕ ເດືອນພຶດສະພາ ພ.ສ ໒໕໑໕ ຄ.ສ ໑໙໗໔ ທີ່ບ້ານອຸທຸມໃຫມ່ ເມືອງອຸທຸມ ແຂວງຈໍາປາສັກ ເປັນບຸດຄົນທີສາມໃນຈໍານວນພີ່ນ້ອງທັງຫມົດ ໑໐ ຄົນ ຂອງທ້າວທອງດໍາ ແລະ ນາງເປ ຈໍາປາອຸທຸມ.

ວົງສະກຸນ ແລະ ບັນພະບູຣຸດເດີມນັ້ນ ມີຄວາມເປັນມາຄະອຽດດັ່ງນີ້.

ເມື່ອປີ ພ.ສ ໒໒໕໕ ຄ.ສ ໑໗໑໓ ເຈົ້າຫນໍ່ກະສັດຣາຊະບັດດາ ຂອງພຣະເຈົ້າສຸຣິຍະວົງສາທໍາມິກະຣາດ ນະຄອນວຽງຈັນ ໄດ້ຮັບການສະຖາປະນາພິເສກໃຫ້ຂຶ້ນຄອງນະຄອນຈໍາປາສັກນັກຄະບຸຣີສີ ແລະ ໄດ້ຖວາຍພຣະນາມວ່າ ພຣະເຈົ້າສ້ອຍສີສະຫມຸດພຸດທັງກຸນພຣະອົງໄດ້ມີຄວາມສໍາພັນທະໄມຕີກັບເຈົ້າກໍາປູຊາເມືອງບັນທາຍເພັດ ແລະໄດ້ພຣະຣາຊະທິດາຂອງເຈົ້າເມືອງນັ້ນ ມາເປັນມະເຫສີອົງຫນຶ່ງ ໄດ້ມີບຸດພຣະນາມວ່າ ເຈົ້າໂພທິສານກຸມມານ ຕໍ່ມາເມື່ອປີ ພ.ສ ໒໒໗໓, ຄ.ສ ໑໗໓໐ ໄດ້ຄອງເມືອງ ສີຣິຈໍາປັງ (ບ້ານເກິງບົວສີ) ເຈົ້າໂພທິສານມີບຸດ ນາມວ່າ ເຈົ້າສຸວັນນະສານ ໄດ້ຄອງ

ເມືອງແທນບິດາ ແລະໄດ້ບຸດຊື່ວ່າເຈົ້າແກ້ວ ເຫດການບ້ານເມືອງເກີດຄວາມວຸ້ນວາຍເປັນເຫດໃຫ້ຍ້າຍເມືອງສີຣີຈໍາປັງ ເຈົ້າແກ້ວ ມີບຸດຊື່ວ່າເຈົ້າອິ້ນ ຕໍ່ມາໄດ້ຄອງເມືອງອຸທຸມພາຣາ ເມື່ອປີ ພ.ສ ໒໔໑໔ ຄ.ສ ໑໗໗໑ ແລະ ໄດ້ຮັບການສະຖາປານາ ເປັນພຣະສຸຣິຍະວົງສາ ຈາກເຈົ້າຄອງນະຄອນຈໍາປາສັກ (ສະເດັດເຈົ້າຍຸຕິທໍາມະທອນຄໍາສຸກ) ພຣະສຸຣິຍະວົງສາອິ້ນ ມີບຸດຊື່ວ່າ ເຈົ້າບົວຄໍາ. ເຈົ້າບົວຄໍາໄດ້ຄອງເມືອງອຸທຸມແທນບິດາ ເມື່ອປີ ພ.ສ ໒໔໑໙ ຄ.ສ ໑໗໗໖ ເຈົ້າບົວຄໍາໄດ້ສ້າງປະຫວັດວີຣະກໍາ ໄວ້ໃນໜ້າປະຫວັດສາດ ຂອງຊາດລາວ ແລະຍັງໄດ້ຖືກກ່າວອ້າງຖາມເຖິງຢູ່ຕະຫລອດເວລາ. ອັນທີ່ພົ້ນເດັ່ນກ່ວາໝູ່ນັ້ນ ກໍຄືການຕໍ່ສູ້ຕ້ານກັບຈັກກະພັດຝຣັ່ງ ເມື່ອປີ ໑໗໘໖ ທີ່ເຂດເມືອງໄຊງບ້ານຄອນດອນເດດ. ຈົນກະທັ່ງເຖິງປີ ຄ.ສ ໑໙໑໑ ເພິ່ນຈຶ່ງໄດ້ເຖິງແກ່ອະສັນຍະກໍາ ຢູ່ທີ່ເມືອງອຸທຸມ ເຈົ້າບົວຄໍາໄດ້ມີບຸດຊື່ວ່າ ເຈົ້າເຮືອນເຄືອຄໍາ ຊຶ່ງເປັນບຸດຄົນທີ ໔ ຂອງບຸດທັງໝົດ ໖ ຄົນ ກັບເຈົ້າໝ່ອມອ່ອນ ເຈົ້າເຮືອນເຄືອຄໍາໄດ້ສືບທອດພາລະກິດຂອງບິດາ ແລະໄດ້ມີບຸດຊື່ວ່າ ຍາໜູແກ້ວ ຄົນທີໜຶ່ງກັບເຈົ້າໝ່ອມກ້ອນຄໍາ. ຍາໜູແກ້ວ ໄດ້ຮັບຕໍາແໜ່ງເປັນຂຸນຕາແສງ ແລະ ໄດ້ມີພັນລະຍາຊື່ວ່າ ນາງກູ້ຍ

ເຊິ່ງມີບຸດດ້ວຍກັນ ລ ຄົນ ຄົນທີສອງຊື່ວ່າ ທ້າວທອງດໍາ, ທ້າວທອງດໍາ ໄດ້ແຕ່ງງານກັບນາງເປ ມີບຸດດ້ວຍກັນ ໑໐ ຄົນ. ບຸດຄົນທີສາມຊື່ວ່າ ຊາຍຄໍາ ຈໍາປາອຸທຸມ.

ເຂົາເປັນຄົນໂຊກດີທີ່ໄດ້ເກີດຢູ່ໃນຕົວເມືອງອຸທຸມ ເຫດທີ່ວ່າ ໂຊກດີນັ້ນເພາະປະຫວັດຄວາມເປັນມາຂອງເມືອງອຸທຸມ ໄດ້ບອກໄດ້ວ່າ

ຄັ້ງທໍາອິດ ເມື່ອປີ ພ.ສ ໒໔໑໔, ຄ.ສ ໑໗໗໑ ໄດ້ສະຖາປະນາຈາກບ້ານທ່າຄໍາຂຶ້ນເປັນເມືອງອຸທຸມທາຣາ. ມາເຖິງປະມານປີ ພ.ສ ໑໔໕ລ ຄ.ສ ໑໘໔໐ ຈຶ່ງໄດ້ຫວ່າງເປົ່າຈາກຜູ້ຄອງເມືອງ.

ຄັ້ງທີສອງ ເມື່ອປີ ພ.ສ ໑໕໑໘ ຄ.ສ ໑໘໕໘ ໄດ້ສະຖາປານາຂຶ້ນເປັນເມືອງອີກຄັ້ງໜຶ່ງ ຈົນແກ່ຍາວມາເຖິງປີ ພ.ສ ໒໕໑໗ ຄ.ສ ໑໘໗໕ ຈຶ່ງໄດ້ຫວ່າງເປົ່າຈາກຜູ້ປົກຄອງລົງ. ຈະເຫັນໄດ້ວ່າ ໃນລະຫວ່າງປີ ຄ.ສ ໑໘໗໘ ນັ້ນອຸທຸມໄດ້ກາຍເປັນເມືອງຄັ້ງທີສອງ.

## ບັນພະຊາ-ອຸປະສົມບົດ

ບັນພະຊາ ເມື່ອວັນທີ ໑໔ ເດືອນທັນວາ ປີ ຄ.ສ ໑໙໗໔ ທີ່ບ້ານອຸທຸມໃໝ່. ເມືອງສຸຂຸມາ ແຂວງຈໍາປາສັກ. ໂດຍມີພຣະອາຈານປູ່ຫນູຄໍາ ເປັນພຣະອຸປັດຊາຈານ.

ອຸປະສົມບັດ ເມື່ອວັນທີ ໗ ເດືອນມິຖຸນາ ປີ ຄ.ສ ໑໙໙໓ ທີ່ວັດເທພະນິມິດທາດຝຸ່ນ ເມືອງຈັນທະບູຣີ ນະຄອນຫຼວງວຽງຈັນ ໂດຍມີ ພຣະຄຣູວິຈິດ ວິໄລພອນ ເປັນພຣະອຸປັດຊາຈານ.

ພຣະອາຈານບຸນສ່ວນ ພັນທະວົງ ເປັນພຣະກໍາມະວາຈາຂວາ, ພຣະອາຈານບຸນປອນ ສອນສັກສິດ ເປັນພຣະກໍາມະວາຈາຊ້າຍ

ສັດທາການບວດໂດຍ ປະທານສູນກາງອົງການພຸດທະສາສນາສໍາພັນລາວ ດຣ. ພຣະອາຈານໃຫຍ່ມະຫາວິຈິດ ສິງຫະຣາຊ ພ້ອມດ້ວຍຍາດໂຍມບ້ານທັດສະດີ ກໍຄືຍາດໂຍມນະຄອນຫລວງວຽງຈັນ.

## ດ້ານການສຶກສາ

ການສຶກສາໃນເບື້ອງຕົ້ນ ກໍພ້ອມດຽວກັນການເຂົ້າເປັນສັງກະລີວັດເມື່ອປີ ຄ.ສ ໑໙໗໐ ໃຊ້ເວລາຢູ່ສອງປີ ຮຽນຕົວຫນັງສື

ທັມ ທ່ອງຫນັງສືສູດ ຮຽນທັມມະ ເຊິ່ງມີພຣະອາຈານປູ່ຫນູແກ້ວ ເປັນຜູ້ໃຫ້ການອົບຣົມສັ່ງສອນ.

ປີ ຄ.ສ ໑໙໗໔-໑໙໗໖ ຮຽນຈົບປະຖົມສົມບູນທີ່ບ້ານເກີດ ເສັງໄດ້ທີ ໑ ທົ່ວເຂດ.

ປີ ຄ.ສ ໑໙໗໕-໑໙໗໙ ຮຽນຈົບມັດທະຍົມສົງໂພນສີໃດ ເມືອງປາກເຊ ແຂວງຈຳປາສັກ (ເຄີຍເປັນນັກຮຽນເກັ່ງທີ່ເມືອງ ປາກເຊ)

ປີ ຄ.ສ ໑໙໙໐-໑໙໙໔ ຮຽນຈົບອຸດົມສຶກສາສົງທາດ ຫລວງນະຄອນວຽງຈັນ.

ປີ ຄ.ສ ໑໙໙໔ ໄດ້ເຂົ້າອົບຣົມທຳມະກະຖຶກ ຊຸດທີ ໑ ທີ່ ວັດມະຫາພຸດທະວົງສາໂສກປາຫລວງ ນະຄອນຫລວງວຽງຈັນ.

ປີ ຄ.ສ ໑໙໙໕-໑໙໙໙ ຮຽນຈົບປະຣິນຍາຕີ ເອກເສດ ຖະສາດຈາກມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ.

ປີ ຄ.ສ ໒໐໐໐ ສຶກສາປະຣິນຍາໂທ ເອກພຸດທະສາສນາ ຫລັກສູດນາໆຊາດ ມະຫາວິທະຍາໄລ ມະຫາຫຈຸລາລົງກອນຣາຊະ ວິທະຍາໄລ.

## ຫນ້າທີ່ການງານ

ປີ ຄ.ສ ໑໙໙໖-໑໙໙໙ ຫົວຫນ້າວິຊາການ, ທີ່ປຶກສາຂອງຊຸມນຸມນັກສຶກສາສົງລາວໃນໄທ.

ປີ ຄ.ສ ໑໙໙໙ ພະນັກງານປະຈໍາຫ້ອງການສູນກາງ ອ.ພ.ສ

ປີ ຄ.ສ ໒໐໐໐ ປະທານສະພາຊຸມນຸມນັກສຶກສາສົງລາວໃນໄທ.

ປີ ຄ.ສ ໑໙໙໙ ເປັນຄະນະເລຂາກອງປະຊຸມສະໄຫມສາມັນ ຂອງສູນກາງອົງການພຸດທະສາສນາສໍາພັນລາວ ທີ່ວັດມະຫາພຸດທະວົງສາໂສກປ່າຫລວງນະຄອນວຽງຈັນ.

ປີ ຄ.ສ ໒໐໐໑ ເປັນຄະນະເລຂາກອງປະຊຸມສະໄຫມສາມັນຂອງສູນກາງອົງການພຸດທະສາສນາສໍາພັນລາວ ທີ່ວັດຫລວງເມືອງປາກເຊ ແຂວງຈໍາປາສັກ

ປີ ຄ.ສ ໒໐໐໑ ເປັນຄະນະກໍາມະການບໍຣິຫານໂຄງການເມດຕາທັມຕ້ານເອດສ໌

ປີ ຄ.ສ ໒໐໐໑ ເປັນເລຂາທິການຊຸມນຸມນັກຂຽນສົງລາວ

ຜົນງານຜ່ານມາ

ປື້ມຄູ່ມືຊາວພຸດ ປີ ຄ.ສ ໑໙໙໙

ປື້ມຍາທ່ານສົມເດັດລຸນ ຈຳປາສັກ ປີ ຄ.ສ ໒໐໐໐

ປື້ມອະນຸສອນສະຫລອງປະຣິນຍາພຸດທະສາດດຸດສະດີບັນດິດກິດຕິມະສັກ ຂອງອົງປະທານສູນກາງອົງການພຸດທະສາສນາສຳພັນລາວ ປີ ຄ.ສ ໑໙໙໙

ປື້ມອະນຸສອນ ສະຫລອງ ອັກຄະມະຫາບັນດິດກິດຕະມະສັກ ຂອງອົງປະທານກິດຕິມະສັກ ທີ່ປຶກສາສູນກາງ ອ.ພ.ສ ປີ ຄ.ສ ໒໐໐໐ (ຍາທ່ານພຣະຄຣູມະຫາພຸດທະວົງສາ ປຣິຊາສຸທັມມະໂກສານ)

ເອກະສານ: - ປະຫວັດຈຳປາສັກ

- ໔໕ ປີ ພຣະສົງລາວ

- ພຣະເຈົ້າໄຊຍະເສດຖາ ກັບພຣະພຸດທະສາສນາ

- ພຣະເຈົ້າອະນຸວົງ ກັບພຣະພຸດທະສາສນາ

- ສົມເດັດເຈົ້າມະຫາອຸປະຮາດ ເພັດຊະຣາດ ກັບພຣະພຸດທະສາສນາ.

- ປະຫານສິງພຣະນັກພດທະນາໃນສາຍຕາ

ຂອງສາທຸຊົນ (ພຣະມະຫາວິຈິດ ສິງຫະຣາຊ)

- ນິງຄຸນຍອດຊີວິດ ລັฐ ປະການ

- ດ້ວຍຄວາມຫວັງ ແລະ ກໍາລັງໃຈ

- ພຣະພຸດທະສາສນາກັບສັນຕິທັມ

ຂຽນລົງໃນຂ່າວສານ, ຫນັງສືພິມ

- ຫນັງສືພິມປະຊາຊົນ

- ຫນັງສືພິມວຽງຈັນໃຫມ່

- ປະເທດລາວ

- ວັນນະສິນ

# ສຶກສາສາສນາພິທີ ໃນແງ່ເຫດ-ຜົນ

ໂດຍ: ພຣະຊາຍຄຳ ຈຳປາຣຸທຸມ

ພຸດທະສາສນາໃນສະໄຫມຕົ້ນໆ ບໍ່ມີສາສນາພິທີໃດໆ ເລີຍ ເພາະພຣະພຸດທະເຈົ້າ ແລະ ສາວົກບໍ່ແມ່ນຜູ້ໄຖ່ບາບ ແຕ່ເປັນຜູ້ຊີ້ບອກທາງທີ່ຖືກຕ້ອງເພື່ອປັດເປົ່າຄວາມທຸກອອກຈາກປວງຊົນ ເມື່ອພຸດທະສາສນາແຜ່ກ້ວາງອອກໄປ ຈຳນວນພຣະສາວົກກໍຫລາຍຂຶ້ນ ກົດລະບຽບກໍຈຳເປັນຕ້ອງບັນຍັດຈັດຕັ້ງ ເພື່ອເປັນບັນທັດຖານແຫ່ງພຶດຕິກຳຮ່ວມ ແລະ ດຳເນີນພຸດທະສາສນາກິດໃຫ້ບັນລຸໄປດ້ວຍດີ.

ພາຍຫລັງພຸດທະປະຣິນິບພານ ພຸດທະສາສນາຍັງຄົງເຜີຍແຜ່ໄປຢ່າງບໍ່ມີຢຸດຢັ້ງສູ່ປະເທດເອເຊັຍ ຫລາຍປະເທດ ປະຊາຊົນໃນແຕ່ລະທ້ອງຖິ່ນ ບໍ່ພຽງແຕ່ຈະປະຕິບັດຕາມຄຳສອນຂອງພຣະພຸດທະເຈົ້າເທົ່ານັ້ນ ແຕ່ຍັງສ້າງລະບຽບກິດເກນໃຫມ່ໆ ທີ່ບໍ່ຂັດຕໍ່ທັມວິໃນ ມາສະຫນັບສະຫນູນຕໍ່ການປະຕິບັດທັມດ້ວຍ ລະບຽບເຫລົ່ານີ້ ໃນເບື້ອງຕົ້ນມີເຫດຜົນ ແລະ ເປົ້າຫມາຍທີ່ຊັດເຈນ ຈາກນັ້ນກໍໄດ້ສືບທອດມາຫລາຍຊົ່ວອາຍຸຄົນ ປະຊາຊົນຮຸ່ນຫລັງ ກໍພະຍາຍາມປະຍຸກໃຊ້ໃຫ້ເຫມາະສົມກັບສະຖານທີ່ການເວລາ ແລະສິ່ງແວດລ້ອມ ລະບຽບທີ່ສ້າງຂຶ້ນໃຫມ່ເຫລົ່ານີ້ ຕໍ່ມາກາຍເປັນສາສນາພິທີ ເຊິ່ງມີຫລາຍຢ່າງແຕກຕ່າງອອກໄປ ແຕ່ລະເຫດການ ແລະ ສະຖານທີ່.

ເວລາຜ່ານເລີຍມາດົນນານສາສນາພິທີເຫລົ່ານີ້ ກໍກາຍເປັນປະເພນີວັດທະນະທັມ ອຸດົມການ ແລະ ປະຣັດຊະຍາຊີວິດປະຈຳຖິ່ນໃນສັງຄົມພຸດ ເວົ້າໄດ້ວ່າ ສາສນາພິທີມີອິດທິພົນຕໍ່ຊີວິດນັບແຕ່ເລີ້ມຕົ້ນເກີດຂຶ້ນມາຈາກມານດາຈົນເຂົ້າສູ່ປ່າຊ້າກອງພອນ (ເຕົາເຜົາ)

ຜົນກະທົບຂອງສາສນາພິທີທີ່ມີຕໍ່ພຸດທະສາສນາມີທັງໃນດ້ານບວກ ແລະ ດ້ານລົບດັ່ງນີ້:

1. ຊາວພຸດສ່ວນຫລາຍໃຫ້ຄວາມສົນໃຈ ປະກອບພິທີກຳຫລາຍກ່ວາຈະປະຕິບັດທັມຢ່າງເຄັ່ງຄັດຈິງຈັງ ພວກເຂົາພາກັນລືມເປົ້າໝາຍ ແລະ ເຫດຜົນດັ້ງເດີມ ຕິດຕົມ, ຕິດຕັງ ຢູ່ກັບການປະກອບສາສນາພິທີ ພວກເຂົາກຳລັງປ່ຽນພຸດທະສາສນາໃຫ້ເປັນຂອງລຶກລັບ ສຳລັບການບ່ວງສວງອ້ອນວອນ ຫລາຍກ່ວາທີ່ຈະເປັນທັມມະປະຕິບັດໄດ້ (ເນັ້ນທີ່ກັມຄືການກະທຳ).

ແກ່ນແທ້ຂອງພຸດທະສາສນາຈະຖືກລືມຄວາມສັບສົນ ແລະ ຄວາມຂັດແຍ້ງທີ່ວ່າ ອັນໃດຄືພຸດທະສາສນາ ທີ່ແທ້ຈິງ ຈະປະກົດແຜ່ຂະຫຍາຍກ້ວາງອອກໄປ ທັມມະຊາດ ຂອງສາສນາພິທີຢ່າງໜຶ່ງ ກໍຄືຄວາມແຕກຕ່າງກັນ (ລວມທັງການຖວາຍທານເນື່ອງໃນງານຕ່າງໆດ້ວຍ).

ແຕ່ຄຳສອນທີ່ແທ້ຈິງຂອງພຣະພຸດທະເຈົ້າສອດປະສານເຂົ້າກັນໄດ້ຢ່າງພໍດີ ການຕີຄວາມຄຳສອນໄປຄົນລະທິດລະທາງຈະກໍ່ໃຫ້ເກີດຜົນກໍຄື ຄວາມເຂົ້າໃຈຜິດ ສັດທັມປະຕິຮູບ ຈະໄດ້ຮັບ

ການສັ່ງສອນ ແລະ ຖ່າຍທອດສືບຕໍ່ໄປ ເມື່ອການປະຕິບັດຜິດຂະຫຍາຍຕົວກັນຫລາຍຂຶ້ນ ຄວາມສູນສິ້ນແຫ່ງພຸດທະສາສນາທີ່ແທ້ກໍຈະຕາມມາພາຍຫລັງ (ເຖິງຄາວເສື່ອມ).

2. ບົດບາດຂອງພຣະສົງ ກໍປ່ຽນແປງຈາກຜູ້ຖືປະທີບທັມ ມາເປັນຜູ້ທຳພິທີກຳ (ເຈົ້າຂອງພິທີກຳທຳຕົວເປັນຜູ້ສັກສິດອ້າງເດຊະປາຣະມີ, ລືມທີ່ມາຂອງຕົນ) ພຣະສົງປ່ຽນແປງບົດບາດຈາກຜູ້ນຳທາງວິນຍານມາເປັນຜູ້ບໍຣິການປະຊາຊົນ (ບໍລິການແບບຄົນຕາບອດຈູງຄົນຕາບອດ) ຄົງບໍ່ມີໃຜກ້າປະຕິເສດໄດ້ເລີຍວ່າພຣະສົງສ່ວນໜຶ່ງໃຫ້ບໍລິການແກ່ປະຊາຊົນ ທຸກສິ່ງທຸກຢ່າງທີ່ປະຊາຊົນຕ້ອງການ (ລວມທັງການເອົາເລກ-ເອົາຫວຍ ເສຍເຄາະ, ທຳພິທີແທນພາມ, ມີສານເຈົ້າ, ສານພະພູມ, ການເຈີມເປັນຕົ້ນ) ເຖິງວ່າບາງຄັ້ງຈະຂັດກັບສັດຈະທັມທີ່ແທ້ຈິງກໍຕາມ ຂະນະດຽວກັນ ເປັນທີ່ຊາບກັນດີວ່າ ພຣະສົງສ່ວນນ້ອຍກຳລັງພະຍາຍາມຢ່າງແຮງກ້າທີ່ຈະສຶກສາປະຕິບັດ ແລະເຜີຍແຜ່ຄວາມຖືກຕ້ອງໄປສູ່ປະຊາຊົນຢ່າງຈິງຈັງ.

3. ພຣະສົງບາງອົງປ່ຽນວິຖີຊີວິດອັນງ່າຍໆໄປສູ່ຊີວິດທີ່ຫລູຫລາຟູມເຟືອຍ ແລະ ຂີ້ຄ້ານ ທີ່ມັນເປັນຢ່າງນີ້ ກໍ່ເພາະມີສາເຫດມາຈາກຄວາມຮັ່ງມີລ້ຳລວຍທີ່ໄດ້ຮັບຈາກການປະກອບພິທີກຳ (ຄະແນນນິຍົມແບບຜິດໆ). ສາສນາພິທີບໍ່ໄດ້ມີຜົນກະທົບໃນດ້ານລົບຢ່າງດຽວ ແຕ່ດ້ານບວກກໍພໍຈະມອງເຫັນໄດ້ດັ່ງນີ້:

1/ ພຸດທະສາສນາພິທີເປັນທີ່ເພິ່ງທາງໃຈຂອງບຸກຄົນທີ່ຍັງບໍ່ມີຄວາມພ້ອມທີ່ຈະສຶກສາທັມມະຂັ້ນສູງ ແລະ ເດັກນ້ອຍຜູ້ເລີ່ມຕົ້ນສຶກສາພຸດທະສາສນາ ສາສນາພິທີຊ່ວຍໃຫ້ບຸກຄົນເຫລົ່ານັ້ນງົດເວັ້ນຈາກຄວາມຊົ່ວ ໃຫ້ກະທຳແຕ່ຄວາມດີ.

2/ ໃນພາວະວິກິດ ສາສນາພິທີເລີ່ມສ້າງຂວັນກຳລັງໃຈ ແລະ ຄວາມຮູ້ສຶກເປັນອັນໜຶ່ງອັນດຽວກັນຂອງມວນຊົນໄດ້.

3/ ພຸດທະສາສນາພິທີເປັນແຫລ່ງກຳເນີດສຳຄັນຂອງວັດທະນະທັມ ປະເພນີ ທັງໃນລະດັບທ້ອງຖິ່ນ ແລະ ລະດັບຊາດ.

4. ພຸດທະສາສນາພິທີ ເປັນຮາກຖານ ແລະ ເຄື່ອງມືໃນການພັດທະນາສຶກສາປະຕິບັດທັມໃນໝູ່ພຸດທະບໍລິສັດ (ຊາວພຸດ) ຕາມປະເພນີຂອງຊາວພຸດລາວ ທີ່ເຄີຍປະຕິບັດກັນມາເຊັ່ນການແຕ່ງງານ, ຂຶ້ນເຮືອນໃໝ່, ງານສົບ, ຊາວພຸດມັກຈະນິມົນພຣະສົງມາສະແດງທັມມະເທດສະໜາ ນັບເປັນໂອກາດພິເສດທີ່ເປີດໂອກາດໃຫ້ປະຊາຊົນທີ່ມາຮ່ວມງານໄດ້ສຶກສາ ແລະ ປະຕິບັດທັມໄປດ້ວຍ.

ຢ່າງໃດກໍຕາມ ເຫດທີ່ນຳເລື່ອງສາສນາພິທີມາສະເໜີນີ້ເພື່ອໃຫ້ຊາວພຸດທັງຫລາຍໄດ້ສຶກສາ ແລະ ເຂົ້າໃຈວ່າ ເຖິງວ່າສາສນາພິທີຈະມີຂໍ້ບົກຜ່ອງອີກມາກມາຍຫລາຍຢ່າງກໍຕາມ ມະນຸດກໍສາມາດແກ້ໄຂໄດ້ ເມື່ອໄດ້ມີການສຶກສາທີ່ແທ້ຈິງ ສາສນາພິທີເຫລົ່ານັ້ນ ກໍຕ້ອງປັບປຸງແກ້ໄຂປ່ຽນແປງ ແລະ ປະຍຸກໃຊ້ໃຫ້

ເຫມາະສົມກັບວິຖີຊີວິດສະໄຫມໃຫມ່ ສິ່ງແວດລ້ອມ ແລະ ເງື່ອນໄຂອື່ນໆທີ່ກຳລັງປ່ຽນແປງທຸກຂະນະ.

ເຫນືອສິ່ງອື່ນໃດ ຊາວພຸດພະຍາຍາມນຶກເຖິງການລິເລີ່ມສາສນາ ພິທີ ຄັ້ງທຳອິດແລ້ວຄົ້ນຄ້ວາໃຫ້ພົບວ່າ ເປົ້າຫມາຍຫລັກເກນ ແລະ ເຫດຜົນຂອງສາສນາພິທີນັ້ນຢູ່ທີ່ໃດ ທັງໆທີ່ຮູ້ກັນດີຢູ່ວ່າ ສາສນາພິທີ ນັ້ນເຫມືອນເປືອກໄມ້ ສາສນາພິທີກໍຍັງຄົງເປັນປະໂຫຍດຫລາຍ ຫາກຜູ້ປະຕິບັດ ປະຕິບັດດ້ວຍສະຕິປັນຍາແລະເຫດຜົນ.

ໂດຍພິເສດສຸດກໍຄືພຣະສົງ ແລະ ຍາດໂຍມຄວນຈະໄດ້ມີການສຶກສາຫາເຫດຜົນໃຫ້ຊັດເຈນ ແຈ່ມແຈ້ງຈະໄດ້ສະກັດກັ້ນ ສິ່ງຫຍໍ້ທໍ້ ແລະ ສົ່ງເສີມສິ່ງທີ່ເປັນປະໂຫຍດ. ຖ້າຫາກຍັງມາມົວແຕ່ຄວາມເກັງໃຈກັນລະຫວ່າງພຣະສົງ ແລະ ຍາດໂຍມເຫມືອນຢ່າງທີ່ປະຕິບັດກັນຢູ່ນີ້ ພຸດທະສາສນາກໍຄົງມົວຫມອງອັບເສົາລົງແນ່ນອນ. ພຣະສົງກໍຕ້ອງກ້າທຳຫນ້າທີ່ຂອງຕົນຕາມພຣະວິໃນ ແລະຄະຣາວາດກໍຕ້ອງປະຕິບັດຕາມຫນ້າທີ່ຂອງຕົນຢ່າງເຄັ່ງຄັດ

ຫວັງວ່າທຸກທ່ານຄົງຮັບຟັງ ແລະ ເຂົ້າໃຈດ້ວຍດີ ເພື່ອນຳໄປຄິດໄຕ່ຕອງເບິ່ງຄືນກ່ຽວກັບບັນຫາທີ່ໄດ້ເວົ້າມານີ້.

# ດ້ວຍຮັກ ແລະ ຜູກພັນ

ໂດຍ: ຊາຍຄຳ ຈຳປາອຸທຸມ

ມີຫລາຍຄົນສົມຫວັງກັບຄວາມຮັກໃນສິ່ງທີ່ພວກເຂົາຕ້ອງການໃຝ່ຝັນ ແລະ ປາຖະໜາ ພວກເຂົາກໍມີຄວາມສຸກຊື່ນໃຈເບີກບານແຈ່ມໃສ ຍິ້ມໄດ້ໝົດທັງວັນ ເໝືອນກັບວ່າ ພວກເຂົາໄດ້ເປັນເຈົ້າຄອບຄອງໂລກອັນເອີ້ນວ່າ ສະຫວັນແທ້ໆ. ແຕ່ເວລາດຽວກັນນັ້ນກໍມີອີກພວກໜຶ່ງທີ່ເສົ້າຣະທົມຂົມຂື່ນ ທົດທູ່ຫ່ຽວແຫ້ງບໍ່ຕ້ອງການຢາກຈະຢູ່ໃນໂລກນີ້ຕໍ່ໄປອີກ. ໝົ່ນໝອງຊີວິດຈິດໃຈ ເໝືອນກັບວ່າໂລກນີ້ ບໍ່ໃຫ້ຄວາມຍຸດຕິທຳ ແກ່ພວກເຂົາເລີຍກັ້ນແກ້ງແທງຫົວໃຈ ປິດບັງກັ້ນກາງແຫ່ງຄວາມປາຖະໜາ ອັນຫວານຊື່ນ. ພວກເຂົາບໍ່ເຄີຍສຸກສົມຫວັງ ໃນສິ່ງທີ່ພວກເຂົາຕ້ອງການ ບາງຄັ້ງພວກເຂົາກໍໂອດໂອຍ ໂທດຟ້າໂທດດິນ ນີ້ຄືຄວາມຜິດຫວັງ ແລະ ອາການຂອງຄົນຜິດຫວັງ.

ຄວາມສົມຫວັງ ແລະ ຄວາມຜິດຫວັງນັ້ນ ເກີດມາຈາກໃສ? ມີຫລາຍຄົນຕອບວ່າ ມາຈາກຄວາມຕ້ອງການໃນສິ່ງທີ່ເຂົາຕ້ອງການ ເຊັ່ນຄວາມຮັກເປັນຕົ້ນ.

"ຄວາມຮັກ" ເຖິງວ່າມັນຈະເປັນຖ້ອຍຄຳພຽງສັ້ນໆ ກໍຕາມທີ່ທຸກຄົນຕ່າງກໍກ່າວເຖິງມາທຸກຍຸກທຸກສະໄໝ ເປັນຖ້ອຍຄຳທີ່ກິນໃຈ ແລະ ບາດໝາງຄາງແຄງໃຈ ຣຳພຶງຣຳພັນເຖິງມັນຢ່າງບໍ່ຮູ້ອິດຮູ້ເມື່ອຍ ຈົນກາຍເປັນຄຳອະມະຕະຂອງມະນຸດຊາດ ໂອ ຄວາມຮັກ ເຈົ້າປຽບດັ່ງດວງໃຈຂອງຄົນທົ່ວທັງໂລກ ເຈົ້າເປັນທັງ

ແຮງບັນດານໃຈໃຫ້ເກີດບາງສິ່ງບາງຢ່າງທີ່ສຳຄັນຂຶ້ນໃນພື້ນພິພົບ ໜ່ວຍນີ້ ເຈົ້າເປັນອາລົມໂສກ, ອາລົມສຸກ ໃນຫົວໃຈຂອງມະນຸດ ຢ່າງບໍ່ມີວັນສິ້ນສຸດ ແລະ ຄຳວ່າຄວາມຮັກນັ້ນມັນຊ່າງເລິກເຊິ່ງສຸດ ຈະຫາຄຳໃດມາແທນເຈົ້າໄດ້.

ຫລາຍຄົນຕ່າງກໍໃຫ້ຄຳນິຍາມຄຳວ່າ ຄວາມຮັກແຕກຕ່າງ ກັນ ແລະ ບໍ່ມີວັນຈະຮູ້ຈົບ ເພາະມັນບໍ່ມີສູດສຳເລັດ ບາງຄົນກໍ ກ່າວວ່າຄວາມຮັກຄືຄວາມປາດຖະໜາດີ, ຄວາມຮັກຄືຄວາມ ເຂົ້າໃຈ, ຄືຄວາມ ເສຍສະຫລະ, ແລະ ກໍມີບາງຄົນເວົ້າວ່າຄວາມ ຮັກຄືການໃຫ້ ຫລື ການຮັບ ແລະການເອົາເອີ່ຍອ້າງວ່າ ຮັກຄົນນັ້ນ ຄົນນີ້ ຍິ່ງກ່ວາຊີວິດຈິດໃຈ ໃນທຳນອງບ່າວສາວ ຫວານອົມຂົມ ກືນ ໂອ ຄຳວ່າຄວາມຮັກ ເຈົ້າຊ່າງມີຄວາມໝາຍຫລາຍເຫລືອ ເກີນ ໃຜນໍຈະໃຫ້ຄຳອະທິບາຍໄດ້ເທົ່າກັບຈອມສາສະດາສຳມາ ສຳພຸດທະເຈົ້າທີ່ພຣະພຸດທະອົງຊົງ ສອນໄວ້ວ່າ "ຄວາມຮັກອື່ນໃດ ຈະສະເໝີເໝືອນຮັກຕົນເອງນັ້ນແມ່ນບໍ່ມີ ຕົນເອງນັ້ນແຫລະ ເປັນທີ່ຮັກຍິ່ງກ່ວາສິ່ງອື່ນໃດ" ເຖິງຈະນິຍາມຄວາມຮັກວ່າ ເປັນ ການໃຫ້, ການເສຍສະຫລະ ຄົນເຮົາເພື່ອຕົນເອງ ໃນເບື້ອງຕົ້ນ ແລ້ວ ຈິ່ງແຜ່ອອກສູ່ວົງກວ້າງຄືສັງຄົມ ແລະ ປະເທດຊາດ ເຮົາ ເຄີຍເອົາໃຈໃສ່ທະນຸຖະໜອມຄົນຮັກ ອຸທິດຊີວິດ ອ່ອນຫວານ ຢາກໃກ້ຊິດຕິດແທດ ເໝືອນກັບວ່າ ຊີວິດຄົນໆດຽວກັນ ແຕ່ກ່ອນ ຈະມາເປັນຄົນຮັກ ແລະ ອະດີດຄົນຮັກຂອງເຮົາ ເຮົາເຄີຍຢຸດຄິດ ແລ້ວຫລືບໍ່ວ່າ ເຮົາໄດ້ໃຫ້ຄວາມຜູກພັນ ແລະ ຫ່ວງຫາອາທອນ

ເຂົາພຽງໃດ ຄວາມຜູກພັນໃກ້ຊິດກັນກໍເປັນສິ່ງໜຶ່ງທີ່ພາໃຫ້ຄວາມຮັກກໍ່ຕົວຂຶ້ນໄດ້ ແຕ່ກໍຄືງລືມຄຳເວົ້າທີ່ວ່າ ຮັກຫລາຍກໍເຈັບແສບ ແລະ ຜິດຫວັງຫລາຍ ໄປບໍ່ໄດ້ ທຸກຄວາມຜູກພັນ ຮັດແໜ້ນຢ່າງດູດດື່ມຈິດງາມນັ້ນ ມັກຈະນຳມາເຊິ່ງຄວາມປວດລ້າວຫົວໃຈສະເໜີ ບໍ່ມີຄູ່ຮັກໃດທີ່ໄຮ້ເຊິ່ງຄວາມທຸກທໍຣະມານ ເພາະເມື່ອຮັກ ແລະ ຜູກພັນເກີດຂຶ້ນ ກໍຕ້ອງຫວາດຫວັ່ນຢ້ານວ່າຮັກ ແລະຜູກພັນນັ້ນຈະເດີນຈາກໄປ, ເປັນບໍ່ເກີດແຫ່ງຄວາມວິຕົກກັງວົນຫວາດລະແວງແຄງໃຈ ເຖິງແມ່ນວ່າເຮົາຈະຊື່ນຊົມຄວາມຮັກ ແລະຄວາມຜູກພັນເຮົາກໍຢ່າລືມຄຳສອນທີ່ວ່າ ເກີດຂຶ້ນ ຕັ້ງຢູ່ ແລ້ວກໍດັບໄປ ຫລືວ່າບ່ອນໃດ ມີຮັກບ່ອນນັ້ນຍ່ອມມີທຸກ ແລະ ເຮົາກໍຄວນຮຽນຮູ້, ຮັບຮູ້ ຮູ້ຈັກພິດໄພຂອງຄວາມຮັກຄວາມຜູກພັນດ້ວຍເຊັ່ນກັນ ແຕ່ມັນກໍ່ເປັນເຣື່ອງທຳມະດາຂອງສັດໂລກ, ຈິດໃຈຍ່ອມໃຣ້ເຊິ່ງຄວາມຮັກຄືງເປັນໄປໄດ້ຍາກ ຢ່າງນ້ອຍເຮົາກໍມີພໍ່ແມ່ ພີ່ນ້ອງໃຫ້ຮັກ ນອກນັ້ນກໍມີເມັຍ-ຜົວ-ລູກຍິງລູກຊາຍ ເປັນຕົ້ນ ແລະ ເປັນຄວາມຜູກພັນຢ່າງໃກ້ຊິດ ໂດຍສາຍເຊື້ອເຄືອຍາດຢ່າງປະຕິເສດບໍ່ໄດ້, ເມື່ອໃດກໍຕາມຄວາມພັດພາກເກີດຂຶ້ນຍ່ອມຈະນຳຄວາມໂສກເສົ້າມາສູ່ຕົນນັ້ນ ມັນເປັນເຣື່ອງປົກກະຕິຂອງມັນ ເພາະວ່າຄືງຫາຍາກເຕັມທີ ທີ່ຈະເຂັ້ມແຂງ ບໍ່ຄິດເຖິງຈຸດດັ່ງກ່າວນີ້.

ຄຳວ່າ ຄວາມຮັກ ເມື່ອສົມຫວັງກໍເປັນສຸກ ເມື່ອຜິດຫວັງ ກໍເປັນທຸກ ທັງໆທີ່ມັນເປັນຄຳຄຳດຽວກັນ ແຕ່ມັນກໍທຳໃຫ້ຄົນເປັນ

ທັງສອງຢ່າງ ເພາະສາຍເຫດອັນໃດ ນັ້ນກໍຄືການຍືດຕິດ, ຍືດໝັ້ນນຶກວ່າ ມັນເປັນຂອງເຮົາ.

ທ່ານທີ່ຮັກແພງທັງຫລາຍເຮົາຄວນຄິດເບິ່ງຄືນວ່າ ເມື່ອເຮົາເກີດມາມີອັນໃດຕິດມືມາພ້ອມ ແລະ ເວລາຕາຍເຮົາສາມາດເອົາມອັນໃດແດ່ຕິດມືໄປນຳ ທຸກສິ່ງຢ່າງມັນເປັນທຳມະຊາດ ເຮົາບໍ່ສາມາດບີບບັງຄັບໃຫ້ມັນເປັນໄປຕາມຄວາມຕ້ອງການຂອງເຮົາໄດ້ດອກ.

ຕົວຂອງເຮົາເອງເປັນສິ່ງທີ່ໃຫ້ເຮົາຮັກ ຍິ່ງກ່ວາສິ່ງອື່ນໃດ, ຄຸນງາມຄວາມດີ ກຸດຊື່ສຽງທີ່ເຮົາສ້າງ ດີແລ້ວຈະຕິດຕາມກັບຕົວຂອງເຮົາໄປ ໃນແງ່ທີ່ເປັນແບບຢ່າງໃຫ້ທຸກຄົນເອີ່ຍອ້າງຖາມເຖິງເຮົາທຳກຳເຊັ່ນໃດໄວ້ ກຳນັ້ນຍ່ອມນຳຕອບສະໜອງເຮົາຢ່າງແນ່ນອນ.

ຂໍໃຫ້ກຳລັງໃຈໃຫ້ກັບຄົນຜິດຫວັງ ແລະ ໝົດຫົນທາງ
ຂໍສະແດງຄວາມດີໃຈກັບຄົນທີ່ສົມຫວັງໃນສິ່ງທີ່ຕ້ອງການ
ແລະຂໍເປັນສີ່ກາງໃຫ້ກັບຄົນທີ່ຜິດຫວັງ ແລະ ສົມຫວັງ
ຄວາມທຸກຄືທັມມະຊາດ, ຄວາມທຸກຄືບົດຮຽນ
ສິ່ງທີ່ຜ່ານເຂົ້າມາສູ່ຕົວ ແລະ ຫົວໃຈຂອງເຮົານັ້ນຄື
ປະສົບການ
ປະສົບການທີ່ໃຫ້ຄຸນຄ່າແກ່ເຮົາຢ່າງມະຫາສານນັ້ນຄື
ປະສົບການຊີວິດ.

# ຊີວິດ ແລະ ຜົນງານ



ພຣະມະຫາບຸນທະວິ ວິໄລຈັກຣ໌

ພະນັກງານປະຈຳຫ້ອງການສູນກາງອົງການພຸດທະສາສນາສຳພັນ

ປະທານຊຸມນຸມນັກຂຽນສົງລາວ

## ຊີວະປະຫວັດຫຍໍ້ຂອງ

ພຣະມະຫາບຸນທະວີ ວິໄລຈັກຣ໌ ເກີດເມື່ອວັນທີ ໐໙ ເດືອນພຶດສະພາ ປີ ພ.ສ ໒໕໑໕ ຄ.ສ ໑໙໗໒ ທີ່ບ້ານ ໜອງບົວໃຫຍ່ ເມືອງປະທຸມພອນ ແຂວງຈຳປາສັກ.

ເປັນບຸດຄົນທຳອິດໃນຈຳນວນບຸດ ໕ ຄົນຂອງພໍ່ສຸດຕາ ແລະ ແມ່ທອງດີ ວິໄລຈັກຣ໌

## ບັນພະຊາ (ບວດເປັນສາມະເນນ)

ຢູ່ພາຍໃຕ້ຜ້າກາສາວະພັດເມື່ອອາຍຸ ໑໔ ປີ ພ.ສ ໒໕໒໙ ຄ.ສ ໑໙໘໕ ທີ່ວັດຫລວງຣັດຕະນາຣາມ ບ້ານວັດຫລວງ ເມືອງສາມັກຄີໄຊ ແຂວງອັດຕະປື ໂດຍມີພຣະອາຈານປານ ປາງປະເສີດເປັນພຣະອຸປັດຊາ.

ອຸປະສົມບັດ (ບວດເປັນພຣະພິກຂຸ)

ອຸປະສົມບົດເມື່ອອາຍຸ ໒໔ ປີ ກົງກັບວັນທີ ໒໑ ເດືອນມິຖຸນາ ພ.ສ ໒໕໓໘ ຄ.ສ ໑໙໙໕ ທີ່ພັດທະສີມາວັດພຣະທາດຫຼວງເໜືອ ເມືອງໄຊເສດຖາ ກຳແພງນະຄອນວຽງຈັນ ໂດຍມີ:

ພຣະອາຈານໃຫຍ່ມະຫາວິຈິດ ສິງຫະຣາຊ ປະທານສູນກາງອົງການພຸດທະສາສນາສໍາພັນລາວ ວັດທາດຫລວງເໜືອ ເປັນພຣະອຸປັດຊາ

ພຣະອາຈານທອງຄູນ ໂສພິໂຕ ເປັນພຣະກໍາມະວາຈາຈານ

ພຣະອາຈານອິນຕອງ ຊິນະວະໂຣ ເປັນພຣະອະນຸສາວະນາຈານ ພ້ອມດ້ວຍຄະນະສົງ ໒໕ ອົງ ສໍາເຣັດລົງເວລາ ໕.໐໐ ນ ຂອງຕອນແລງ.

## ດ້ານການສຶກສາ

ຮຽນຈົບນັກທັມຊັ້ນເອກ ປະຣຽນທັມ ໖ ປະໂຫຍກ ແລະ ພຣະອະພິທັມເອກ ຈາກມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ (ມະຫາວິທະຍາໄລແຫ່ງຄະນະສົງໄທ).

## ຜົນງານ ແລະ ໜ້າທີ່ຮັບຜິດຊອບ

ປີ ພ.ສ ໒໕໓໙ ຄ.ສ ໑໙໙໖ ເປັນນັກເຜີຍແຜ່ທັມແລະໄດ້ຊ່ວຍຄະນະ ພ.ສ.ລ ແຂວງຈໍາປາສັກ ລົງເຜີຍແຜ່ພຣະທັມຄໍາສັ່ງສອນ ໑໐ ຕົວເມືອງທົ່ວແຂວງ.

ປີ ພ.ສ ໒໕໔໐ ຄ.ສ ໑໙໙໗ ເປັນນັກເຜີຍແຜ່ທັມ ແລະໄດ້ລົງເຜີຍແຜ່ພຣະທັມຄໍາສອນທີ່ເມືອງປະທຸມພອນແລະເມືອງໂຂງ

ປີ ພ.ສ ໒໕໔໐ ຄ.ສ ໑໙໙໗ ເປັນເຈົ້າອະທິການ ວັດວິ ຈິດທັມມາຣາມ ບ້ານໜອງບົວໃຫຍ່ ເມືອງປະທຸມພອນ ແຂວງຈໍາ ປາສັກ.

ປີ ພ.ສ ໒໕໔໑ ຄ.ສ ໑໙໙໘ ເຂົ້າເປັນສະມາຊິກນັກປະ ພັນລາວ ຂອງສະມາຄົມນັກປະພັນລາວ ກະຊວງຖະແຫລງຂ່າວ ແລະວັດທະນະທັມ.

ປີ ພ.ສ ໒໕໔໑ ຄ.ສ ໑໙໙໘ ເປັນຜູ້ຊ່ວຍວຽກງານດ້ານ ການປົກຄອງສົງຂອງຄະນະ ພ.ສ.ລ ເມືອງປະທຸມພອນ ແຂວງຈໍາ ປາສັກ.

ປີ ພ.ສ ໒໕໔໔ ຄ.ສ ໑໙໙໙ ເປັນຄະນະ ອ.ພ.ສ ເມືອງ ມີຫນ້າທີ່ຮັບຜິດຊອບ ເປັນຫົວຫນ້າກໍາມະທິການສຶກສາສົງ ເມືອງ ປະທຸມພອນ ແຂວງຈໍາປາສັກ.

ປີ ພ.ສ ໒໕໔໔ ຄ.ສ ໑໙໙໙ ເປັນອາຈານສອນພຣະທັມ ມະກະຖຶກຊຸດທໍາອິດ ທີ່ວັດຫລວງເມືອງປາກເຊ ຕາມສາຍການຈັດ ຕັ້ງຂອງ ຄະນະ ອ.ພ.ສ ແຂວງຈໍາປາສັກ.

ປີ ພ.ສ ໒໕໔໒ ຄ.ສ ໑໙໙໙ ອອກເທສະນາທາງສະຖາ
ນີໂທລະພາບແຂວງຈຳປາສັກ ແລະສະຖານທີ່ຕ່າງໆ ຕາມການນິມົນ
ຂອງພຣະສົງ ແລະ ອອກຍາດໂຍມ.

ປີ ພ.ສ ໒໕໔໔ ຄ.ສ ໒໐໐໑ ປັດຈຸບັນ ເປັນພະນັກງານ
ປະຈຳຫ້ອງການສູນກາງອົງການພຸດທະສາສນາສຳພັນລາວ ເປັນປະ
ທານຊຸມນຸມນັກຂຽນສົງລາວເປັນຄະນະກຳມະການໂຄງການເມດຕາ
ທັມຕ້ານເອດສ໌.

ນັບແຕ່ປີ ພ.ສ ໒໕໓໗ ຄ.ສ ໑໙໙໔ ເປັນຕົ້ນມາຂຽນ
ໜັງສືທັມມະທາງສາສນາ ແລະຈານອັກສອນທັມໃສ່ໃບລານຫລາຍ
ເລື່ອງໄດ້ຈັດພິມອອກເຜີຍແຜ່ຜ່ານສາຍຕາມະຫາຊົນມາແລ້ວ ໒໒
ເລື່ອງພໍດີ ແລະຍັງຈະຈັດພິມອອກເຜີຍແຜ່ອີກຕໍ່ໄປ.

ປັດຈຸບັນສັງກັດທີ່ວັດພຣະທາດຫລວງເໜືອ
ໂທຣ (໐໒໑) ໔໕໑໓໐໗

# ການເຂົ້າໄປວັດ

ໂດຍ: ພຣະອາຈານບຸນທະວີ ວິໄລຈັກຣ໌

ພຸດທະສາສນາ ເປັນສາສນາແຫ່ງປັນຍາ ແລະ ເຫດຜົນ ເປັນສາສນາ ຄູ່ກັບຊາດລາວ ແລະ ຄົນລາວມາຕັ້ງແຕ່ອະດີດຈົນເຖິງປັດຈຸບັນ ປະຊາຊົນລາວບັນດາເຜົ່າທັງຍິງຊາຍນ້ອຍໃຫຍ່ ສ່ວນຫລາຍມີຄວາມ ສັດທາເຊື່ອຖືພຣະພຸດທະສາສນາ ແລະ ມີຄວາມເຊື່ອໃນພຣະທັມຄຳສອນຂອງອົງສົມເດັດພຣະສັມມາສັມພຸດທະເຈົ້າຢ່າງແຮງກ້າ ຄຳສອນທາງພຣະພຸດທະສາສນາສອນໃຫ້ເຊື່ອໃນຜົນຂອງກັມ ກັມຫມາຍເຖິງ ການເຮັດ ການກະທຳຂອງຕົນເອງບຸກຄົນທີ່ເຮັດສິ່ງໃດລົງໄປຈະດີ ຫຼືຊົ່ວກໍ່ຕາມ ບຸກຄົນນັ້ນຍ່ອມໄດ້ຮັບຜົນຂອງກັມນັ້ນໆ ເຊັ່ນ: ເຮັດກັມ ດີຍ່ອມດີ ເຮັດກັມຊົ່ວຍ່ອມຊົ່ວ ເຮັດບຸນສ້າງກຸສົນຄຸນງາມຄວາມດີ ຍ່ອມເປັນຜົນກຳໄລຂອງຊີວິດ ແລະ ນຳມາເຊິ່ງຄວາມສຸກກາຍ ແລະ ສຸກໃຈແກ່ຕົນເອງແລະ ຜູ້ອື່ນເຮັດຄວາມຊົ່ວຍ່ອມເປັນຜົນຂາດທຶນ ຂອງຊີວິດ ແລະນຳມາເຊິ່ງຄວາມທຸກກາຍ ແລະ ທຸກໃຈແກ່ຕົນເອງ ແລະ ຜູ້ອື່ນດ້ວຍ. ດັ່ງທີ່ພຣະພຸດທະອົງຕຣັດວ່າ ດູຣາທ່ານທັງຫລາຍຖ້າທ່ານທັງຫລາຍຢ້ານຄວາມທຸກ ຖ້າຄວາມທຸກບໍ່ເປັນທີ່ຮັກຂອງທ່ານແລ້ວທ່ານກໍ່ຢ່າທຳຊົ່ວເດັດຂາດ.

ດ້ວຍເຫດເຊັ່ນນັ້ນ ສາທຸຊົນລາວເຮົາຈຶ່ງນິຍົມກັນເຮັດບຸນ ສ້າງກຸສົນຄຸນງາມຄວາມດີໃຫ້ກັບຊີວິດຕົນເອງ ແລະ ຄອບຄົວຫຼີກ ເວັ້ນ ຈາກການເຮັດບາບທັງຫລາຍທັງປວງ ສ້າງກຸສົນຄວາມດີໃຫ້ ເພີ່ມພູນ ແລະ ເຮັດຈິດໃຈຂອງຕົນໃຫ້ບໍ່ຣິສຸດຜ່ອງໃສສະອາດ ສະຫວ່າງສະຫງົບ ຈາກກິເລດຕັນຫາ ອັນເປັນເຊື້ອໂຣກຂອງຈິດ ໃຈທີ່ເຮັດໃຫ້ມະນຸດທຸກທໍຣະມານຢູ່ຕລອດເວລານັ້ນຄື ຄວາມໂລບ ຄວາມໂກດ ແລະ ຄວາມຫລົງມືດບອດຂອງໃຈ ຄວາມທະເຍີທະ ຍານຄວາມບຽດບຽນຕົນ ແລະ ຜູ້ອື່ນຄວາມອິດສາຣິດສະຫຍາພະຍາ ບາດປອງຮ້າຍຈ່ອງເວນເຫຼົ່ານີ້ເປັນຕົ້ນ.

ຖ້າຫາກບຸນຄົນໃດກໍາຈັດກິເລດ ອັນເປັນເຊື້ອໂຣກຂອງຈິດ ໃຈ ເຫຼົ່ານັ້ນໃຫ້ເບົາບາງລົງ ກໍາຈັດໄດ້ຫລາຍເທົ່າໃດ ຊີວິດຂອງ ເຂົາກໍ່ຈະພົບແຕ່ຄວາມເບົາສະອາດ ສະຫວ່າງ ສະຫງົບສຸກ ແລະ ມີ ຄວາມເບີກບານຈິດໃຈຢູ່ຕລອດເວລາ ຖ້າຫາກວ່າບຸກຄົນໃດບໍ່ກໍາຈັດ ຕົວກິເລດ ເຫຼົ່ານັ້ນໃຫ້ເບົາບາງລົງຊີວິດຂອງເຂົາກໍ່ຈະພົບກັບຄວາມ ເຈັບປວດ ທຸກທໍລະມານ ຂົມຂື່ນທາງຮ່າງກາຍ ແລະ ຈິດໃຈຢູ່ ຕລອດເວລາ ຖ້າຫາກວ່າ ກິເລດເຫຼົ່ານັ້ນມັນສະສົມຂຶ້ນຫລາຍເທົ່າ ໃດ ມັນກໍ່ຍິ່ງເພີ່ມປະຣິມານ ແລະ ກັດກິນໃຈບຸກຄົນນັ້ນໃຫ້ໄດ້ຮັບ ຄວາມເຈັບປວດທຸກທໍຣະມານ ແລະ ຂົມຂື່ນຫລາຍຂຶ້ນເທົ່ານັ້ນ

ເພາະປົກກະຕິຂອງໃຈເປັນສະພາບຮັບໄດ້ແຕ່ສິ່ງດຽວ ຖ້າບາບເຂົ້າ ແຊກບຸນກໍຫາມີດສິດ ທີ່ແນ່ນອນໃນແຕ່ລະວັນທຸກຄົນ ຕ້ອງພົບກັບ ກຸສົນອະກຸສົນ ແລະ ອັບພະຍາກະຕາທັມ ເມື່ອເກີດສິ່ງເຫຼົ່ານີ້ຂຶ້ນໃນ ຈິດໃຈຂອງຕົນແລ້ວ ກໍຕ້ອງມີສະຕິສົມປະຊັນຍະຫາວິທີກໍາຈັດແກ້ ໄຂໃຫ້ເບົາບາງລົງ ແລະຮູ້ຈັກປ່ອຍວາງເສຍເກັບເອົາແຕ່ສິ່ງດີໆໄວ້ ເພິ່ງສຸຂະພາບຈິດຈະໄດ້ປາສະຈາກທຸລືຄວາມເສົ້າໝອງ ແລະຄວາມ ມືດຈະໄດ້ສິ້ນໄປຊີວິດກໍຈະມີແຕ່ຄວາມສະຫງົບສຸກຕລອດການ.

ການເຮັດບຸນສ້າງກຸສົນແຕ່ລະເທື່ອ ຈຶ່ງອາໃສວັດເປັນສູນ ກາງເຕົ້າໂຮມກັນເຮັດບຸນຂອງປວງຊົນຊາວລາວເຮົາ ເມື່ອໃດທີ່ວັນ ສໍາຄັນ ທາງພຣະພຸດທະສາສນາມາເຖິງ ເຊັ່ນ: ວັນສິນ ໆ ຄໍ່າ ໑໕ ຄໍ່າ ວັນບຸນມາຄະບູຊາ ບຸນວິສະຂາບູຊາ ບຸນເຂົ້າພັນສາ ບຸນຫໍ່ ເຂົ້າປະດັບດິນ ບຸນຫໍ່ເຂົ້າສາກ ບຸນອອກພັນສາ ບຸນກະຖິນ ບຸນນະ ມັດສະການພຣະທາດຫຼວງ ບຸນເຂົ້າຈີ່ ບຸນພຣະເຫວດ ເຫຼົ່ານີ້ ເປັນຕົ້ນ ຊາວພຸດລາວ ເຮົາກໍຊຸກຊວນກັນເຂົ້າໄປວັດ ເພື່ອເຮັດບຸນ ຕັກບາດ ຖວາຍສັງຄະທານ ແກ່ພຣະສົງສາມະເນນທີ່ຢູ່ໃນວັດນັ້ນໆ ເຊິ່ງການເຮັດບຸນທີ່ກ່າວມາ ຂ້າງເທິງນັ້ນ ອາດເອີ້ນໄດ້ວ່າ ເຮັດບຸນ ຕາມການ ຫລືປາຣົບວັນເຮັດບຸນ ຖ້າຈະໃຫ້ດີຄວນເຮັດທຸກວັນ ບຸນເລັກບຸນນ້ອຍ ກໍບໍ່ຄວນປະມາດ ເພາະນໍ້າຢົດທີ່ລະນ້ອຍຍັງເຕັມ ໄຫໄດ້ ບຸນສ້າງທີ່ລະນິດກໍເຕັມປ່ຽມໄດ້ ອີກຢ່າງໜຶ່ງສັດທາະຂອງ

ປຸຖຸຊົນ ເອົາແນ່ບໍ່ໄດ້ປົກກະຕິຂອງໃຈ ມັກໄຫຼລົງຕ່ຳຢູ່ສະເໝີ ການເຂົ້າໄປວັດມີຫລາຍລັກສະນະທີ່ແຕກຕ່າງກັນ ເຊັ່ນ: ບາງທ່ານກໍ່ເຂົ້າໄປເພື່ອສຶກສາຫາຄວາມຮູ້ ແລະ ເຝິກຝົນ ອົບຮົມຈິດໃຈຂອງຕົນບາງທ່ານກໍ່ເຂົ້າໄປເພື່ອພັກຜ່ອນສະໝອງ ແລະ ຈິດໃຈຂອງຕົນ ບາງທ່ານກໍ່ເຂົ້າໄປເພື່ອຢ້ຽມຢາມພີ່ນ້ອງທີ່ ເປັນພຣະພິກຂຸຫຼືສາມະເນນໃນວັດນັ້ນໆ ເຖິງທ່ານຈະເຂົ້າໄປວັດ ໃນຮູບແບບໃດກໍ່ຕາມຂໍໃຫ້ທ່ານເຂົ້າໃຈ ແລະນຶກເສີຍວ່າ:

ວັດ ຄືສະຖານທີ່ປູກຝັງຄຸນນະທັມທຸກຢ່າງ ທັງທາງໂລກ ແລະ ທາງທັມຂອງຊາວພຸດລາວຕລອດມາ.

ວັດ ຄືສະຖານທີ່ຢູ່ຂອງພຣະພິກຂຸສາມະເນນຕລອດຮອດອຸປາສົກ ອຸປາສິກາ ບໍ່ໄດ້ເລືອກຊັ້ນວັນນະ.

ວັດ ຄືສະຖານທີ່ເຝິກຝົນອົບຮົມຕົນເອງ ແລະ ເປັນສະຖານທີ່ປະພຶດປະຕິບັດທັມຂອງຜູ້ສະແຫວງບຸນທັງຫລາຍ.

ວັດ ຄືສະຖານທີ່ເປັນຈຸດສູນກາງເຜີຍແຜ່ພຣະທັມຄຳສັ່ງສອນຂອງອົງສົມເດັດພຣະສັມມາສັມພຸດທະເຈົ້າແກ່ພຸດທະສາສະນິກະຊົນທົ່ວໄປ. ໂດຍມີພຣະພິກຂຸສາມະເນນເປັນຜູ້ນຳພາສອນ ຄືຄອຍຊີ້ແຈງອົບຮົມ

ສັ່ງສອນທັມ ໃຫ້ປະພຶດປະຕິບັດໃນທາງທີ່ຖືກຕ້ອງ ແລະ ເປັນທັມ ພຣະຈຶ່ງເປັນແບບຢ່າງທີ່ດີຂອງຄົນທົ່ວໄປໃນສັງຄົມລາວໃນອະດີດກໍຄືປັດຈຸບັນ.

ວັດ ໃຫ້ປະໂຫຍດຢ່າງໃຫຍ່ຫລວງແກ່ສັງຄົມລາວເກ ຊຶນຊຸ່ນ ຕັ້ງແຕ່ອະດີດຈົນເຖິງປັດຈຸບັນ ປະຊາຊົນລາວ ທົ່ວທັງປະເທດໄດ້ອາໄສ ວັດເປັນຈຸດສູນລວມຈິດໃຈ ວັດເປັນແຫລ່ງເຕົ້າໂຮມຄວາມສາມັກຄີ ແລະ ວັດເປັນສະຖານທີ່ປູກຝັງຄຸນນະທັມ ນອກຈາກນີ້ຍັງໃຊ້ວັດ ເປັນບ່ອນວັດຄວາມປະພຶດ ວັດກິຣິຍາມາຣະຍາດວັດຄຸນສົມບັດຜູ້ດີ ໃຫ້ທຸກຄົນໄດ້ຮູ້ວ່າຕົນເອງມີຄວາມດີ ໃຫ້ທຸກຄົນໄດ້ຮູ້ວ່າ ຕົນມີຄວາມດີພໍແລ້ວຫລືຍັງ ຖ້າຍັງມີຂໍ້ບົກຜ່ອງກໍຈະໄດ້ແກ້ໄຂປັບປຸງຕົນເອງໃຫ້ດີຂຶ້ນ ໂດຍມີພຣະພິກຂຸສາມະເນນເປັນຜູ້ພາສອນ.

ວັດ ເກີດຈາກຄວາມຮ່ວມແຮງຮ່ວມໃຈຂອງພຸດທະສາສະນິກະຊົນທຸກຫມູ່ເຫລົ່າ ທັງທີ່ເປັນນັກບວດໃນພຣະພຸດທະສາສນາ ແລະ ຄະລືຫັດ ໄດ້ພ້ອມໃຈກັນສ້າງຂຶ້ນເປັນສົມບັດຂອງພຣະສາສນາ ແລະຂອງ

ຄົນລາວທັງປະເທດ ວັດຈຶ່ງເປັນສະຖານທີ່ສັກສິດທີ່ສຸດຂອງຊາວພຸດລາວທຸກຄົນ.

ສະນັ້ນ ເມື່ອເຂົ້າໄປວັດຫລືຢູ່ໃນວັດຈຶ່ງຄວນເຄົາຣົບສະຖານທີ່ ໂດຍການສັງຣວມ ກາຍ ວາຈາ ແລະ ໃຈຕລອດເວລາ ເມື່ອເຂົ້າໄປເຖິງວັດແລ້ວຄວນລະມັດລະວັງ ບໍ່ຄວນເຮັດໃຫ້ເກີດມີສຽງດັງເກີນໄປຈົນເປັນການລົບກວນສະມາທິຂອງຜູ້ອື່ນ ຖ້າຈະເວົ້າອັນໃດກໍ່ຄວນເວົ້າສິ່ງທີ່ຈຳເປັນ ແລະໃຫ້ລະມັດລະວັງປະຄັບປະຄອງໃຈຂອງຕົນ ໃຫ້ຢູ່ໃນຂອບເຂດແຫ່ງສີລທັມອັນດີງາມຕລອດເຖິງການມີສ່ວນຮ່ວມໃນການຊ່ວຍກັນຮັກສາຄວາມສະອາດຂອງວັດໃຫ້ສົດສວຍງົດງາມດ້ວຍ.

ສິ່ງສຳຄັນຂອງຜູ້ເຂົ້າວັດນັ້ນຄື ມີຄວາມສະຫງົບກາຍ ວາຈາ ແລະ ໃຈ ມີຄວາມສະຫງົບກາຍ ຄືມີຄວາມສັງຣວມກາຍກິຣິຍາມາຣະຍາດໃຫ້ຮຽບຮ້ອຍບໍ່ໃຊ້ພະລະກຳລັງທ່າງກາຍບຽດບຽນຜູ້ອື່ນໃຫ້ໄດ້ຮັບຄວາມເຈັບປວດ ຄວາມສະຫງົບວາຈາ ຄືມີຄວາມສັງຣວມວາຈາ ກິຣິຍາອາການແຫ່ງການເວົ້າຈາໃຫ້ສຸພາບຮຽບຮ້ອຍບໍ່ໃຊ້ຄຳເວົ້າດັງເກີນໄປ ເວົ້າຫຍາບຄາຍ ເວົ້າສິ່ງທີ່ບໍ່ເປັນປະໂຫຍດໂດຍເວົ້າກະແທກແດກດັນຄົນອື່ນໃຫ້ໄດ້ຮັບຄວາມເຈັບປວດທາງ

ໃຈ ຄວາມສະຫງົບໃຈ ຄືມີຄວາມສັງຣວມໃຈ ໃຫ້ຄິດໄປໃນທາງທີ່ດີຄິດໄປໃນທາງທີ່ເປັນບຸນເປັນກຸສົນ ບໍ່ຄິດໄປໃນທາງບຽດບຽນຜູ້ອື່ນ ບໍ່ຄິດໄປໃນທາງໃສ່ຮ້າຍຜູ້ອື່ນ ບໍ່ຄິດອິດສາຣິດສະຫຍາພະຍາບາດຈອງເວນຜູ້ອື່ນ ເມື່ອວາງເສຍ ແລ້ວທຳໃຈຂອງຕົນໃຫ້ສະຫງົບຊີວິດໃນຊີວະນະທີ່ກຳລັງຢູ່ ວັດກໍຈະມີຄວາມສຸກ ເປັນຄວາມສຸກທີ່ບໍ່ອາດຊື້ໄດ້ດ້ວຍເງິນບໍ່ອາດຢິບປ້ອນແບ່ງປັນໃຫ້ກັນໄດ້ມັນເປັນປັດຈັດຕັ້ງໃຫ້ທ່ານເຂົ້າໃຈວ່າ ເຂົ້າວັດທີ່ແທ້ຈິງນັ້ນຄື ເຂົ້າໄປຫາຄວາມສະຫງົບສຸກເຂົ້າໄປສ້າງບຸນ ເຂົ້າໄປດັດແກ້ນິໄສເສຍບໍ່ແມ່ນເຂົ້າໄປຫາຄວາມທຸກ ບໍ່ແມ່ນເຂົ້າໄປສ້າງບາບ ຄວາມສຸກຍິ່ງໄປກວ່າຄວາມສະຫງົບນັ້ນບໍ່ມີ ຄວາມສຸກທີ່ແທ້ຈິງ ນັ້ນຄືຄວາມສະຫງົບກາຍວາຈາ ແລະ ຈິດໃຈຂອງເຮົານັ້ນເອງ ຖ້າໃຈເຮົາບໍ່ມີຄວາມສະຫງົບ ມີແຕ່ຄວາມຮ້ອນຮົນໄປດ້ວຍກິເລດຕັນຫາ ແລະເຕັມໄປດ້ວຍຄວາມໂລບຄວາມໂກດ ຄວາມຫລົງ ແລະ ຄວາມອິດສາຣິດສະຫຍາພະຍາບາດ ຈອງເວນແລ້ວ ຈະຫາຄວາມສຸກທີ່ແທ້ຈິງ ໄດ້ຢ່າງໃດ ຂໍ້ສຳຄັນອີກຢ່າງໜຶ່ງຂອງຜູ້ທີ່ເຂົ້າໄປທຳບຸນໃນວັດນັ້ນກໍຄື ເມື່ອເຂົ້າໄປແລ້ວ ປະພຶດກິຣິຍາອາການຂອງຕົນບໍ່ເໝາະສົມພາຍໃນວັດ ມີການປະພຶດໄປໃນທາງບໍ່ສະຫງົບຮຽບ

ຮ້ອຍ ແຫ່ງກາຍວາຈາ ແລະ ໃຈ ການນຸ່ງຫົ່ມບໍ່ຖືກຕ້ອງຕາມຮີດຄອງປະເພນີ ນຸ່ງຫົ່ມບໍ່ຈົບງາມ ຈິດໃຈຄິດໄປໃນທາງບໍ່ດີ ແລະມີການໃຊ້ຄຳເວົ້າບໍ່ສຸພາບ ເວົ້າຫຍາບຄາຍ ເວົ້າບໍ່ມ່ວນມອນຫູຂອງຄົນຢູ່ອ້ອມຂ້າງຕົນ ແລະເວົ້າສຽງດັງເກີນຄວາມຈຳເປັນ ເຮັດໃຫ້ຜູ້ອື່ນເກີດຄວາມລຳຄານ ຜູ້ນັ້ນຍ່ອມໄດ້ຊື່ວ່າ: ເປັນຜູ້ກຳລັງເຮັດບາບຢູ່ທັງທຳລາຍຄວາມສະຫງົບສຸກຂອງຄົນອື່ນ ແລະທຳລາຍພຣະພຸດທະສາສນາດ້ວຍ ທ່ານໃດທີ່ອ່ານເຂົ້າໃຈແລ້ວ ກິຣິຍາອາການໃດໆ ທີ່ຕົນໄດ້ເຮັດມາດັ່ງທີ່ກ່າວມານີ້ຂໍໃຫ້ປ່ຽນແປງພຶດຕິກຳເຫລົ່ານັ້ນ ຈຶ່ງຈະບໍ່ເປັນບາບຕິດຕາມຕົວເຮົາໄປທຸກພົບທຸກຊາດ ຖ້າຫາກເຮົາຍັງບໍ່ຖິ້ມນິໄສຫລືພຶດຕິກັມເກົ່າໆເດີມໆບາບກັມນັ້ນກໍບໍ່ຖິ້ມເຮົາເໝືອນກັນ

24/7VII

ຫ້າມຈຳໜ່າຍ

ພິມທີ່ໂຮງພິມລາວຈະເລີນ
ໂທ & ແຟັກ : 219296 ມືຖື : 519784